


## ປະຫວັດຄວາມເປັນມາຂອງຊົນເຜົ່າລາວ

ປະຫວັດຄວາມເປັນມາຂອງຊົນເຜົ່າລາວ ຢູ່ແຂວງອຸດົມໄຊ ເປັນເຜົ່າໜຶ່ງທີ່ໄດ້ມາຕັ້ງຖິ່ນຖານ ບ້ານຊອ່ງ ໄດ້ຫຼາຍຊົ່ວຄົນ ແລະ ແຈກຢາຍຢູ່ບັນດາເມືອງ ເຊັ່ນ: ເມືອງຫຼາ, ເມືອງງາ, ເມືອງປາກແບງ, ເມືອງໄຊ ແລະ ລາວພວນເມືອງຮຸນ, ຊົນເຜົ່າລາວບັນດາເມືອງຂອງ ແຂວງອຸດົມໄຊ ໃນຖານເດີມແມ່ນຢູ່ບໍລິເວນພາກໃຕ້ ຂອງ ສປປ ຈີນ ໄດ້ເຄື່ອນຍ້າຍລົງມາຕາມລຳແມ່ນ້ຳຂອງ.

ຊື່ເອີ້ນ: ເຂົາເຈົ້າເອງກໍ່ມັກເຜົ່າລາວ ແລະ ຊົນເຜົ່ານັ້ນກໍ່ເອີ້ນວ່າເຜົ່າລາວ ແລະ ເຂົາເຈົ້າມັນກໍ່ແມ່ນເຜົ່າລາວ, ຄຳສັບທີ່ວ່າ ລາວ ຫຼາຍໆ ຄົນໄດ້ສັນນິຖານວ່າຄົງຈະມາຈາກຄຳສັບ: ລົວະ, ລາວະ, ດາວ ແລະ ອື່ນໆ. ຊົນ ເຜົ່າ ລາວຢູ່ແຂວງອຸດົມໄຊມີພຽງແຕ່ 16 ບ້ານ, ມີ 3609 ຄົວເຮືອນ. ມີແຊງລາວພວນຢູ່ເມືອງຮຸນ, ແຂວງອຸດົມໄຊ ແມ່ນມີສຳນຽງພາສາປາກເວົ້າແຕກຕ່າງກັນ ກັບຊົນເຜົ່າ ໄທພວນຢູ່ ແຂວງ ຊຽງຂວາງ ແລະ ແຫ່ງອື່ນໆໃນປະເທດລາວ.

ພາສາ: ຂອງຊົນເຜົ່າລາວ (ນັບທັງເຜົ່າລາວພວນຢູ່ເມືອງຮຸນ) ແມ່ນໄດ້ຈັດຢູ່ໃນກຸ່ມພາສາປາກເວົ້າລາວ-ໄຕ. ເຜົ່າລາວມີຕົວໜັງສືຂຽນ ແລະ ຍັງໄດ້ເອົາເປັນພາສາກາງຂອງທຸກຊົນເຜົ່າ ແລະ ເອົາຕົວໜັງສືລາວເປັນຕົວໜັງສືທາງລັດຖະການ, ນອກຈາກນີ້ ຍັງມີຕົວໜັງສືທຳທາງພຸດທະສາດສະໜາ.

ຄວາມເຊື່ອຖື, ຮີດຄອງປະເພນີ ແລະ ວັດທະນະທຳ -ສັງຄົມຂອງຊົນເຜົ່າລາວ: ແມ່ນມີຄວາມຫຼາກຫຼາຍ ແລະ ອຸດົມສົມບູນໂດຍສະເພາະ ແມ່ນຮີດ 12 ຄອງ 14 ຊົນເຜົ່າລາວມີຄວາມເຊື່ອຖືພຸດທະສາສະໜາ, ມີວັດວາອາລາມປະຈຳຢູ່ແຕ່ລະບ້ານ ເປັນທີ່ເພິ່ງພາທາງຈິດໃຈຂອງ ຊາວສາສະນິກະຊົນເປັນບ່ອນເຕົ້າໂຮມຄວາມ ສາມັກຄີ ຂອງຊາວບ້ານ. ນອກຈາກນີ້ເຜົ່າລາວຍັງມີຄວາມເຊື່ອຖືຜີພໍ່, ແມ່, ເຮືອນ, ຜີບ້ານ, ຜີປ່າຊ້າ, ຜີເງືອກ ແລະ ຜີອື່ນໆ).

ລະບົບໂຄງສ້າງທາງດ້ານເລືອດເນື້ອເຊື້ອສາຍຕະກຸນຂອງເຜົ່າລາວເປັນລັກສະນະຄອບຄົວດຽວ ແລະ ສືບ ທອດຕະກຸນທາງພໍ່, ມີປະເພນີຜົວດຽວເມຍດຽວ, ຄູ່ບ່າວສາວຫຼັງຈາກແຕ່ງດອງສ້າງຄອບຄົວນຳກັນແລ້ວ ຄູ່ຜົວເມຍ ໜຸ່ມຈະຢູ່ນຳພໍ່ແມ່ຂອງຜູ້ຊາຍ ຫລື ພໍ່ແມ່ຝ່າຍຍິງແມ່ນອີງໃສ່ການຕົກລົງປົງໃຈເຫັນດີເຫັນພ້ອມຂອງສອງຝ່າຍ ບໍ່ໄດ້ບັງຄັບຈິດໃຈຂອງຄູ່ຜົວເມຍ.

ເຜົ່າລາວ ກໍ່ຄືເຜົ່າອື່ນໆ ໃນໝວດພາສາ ລາວ-ໄຕ ມັກຈະປຸກສ້າງເຮືອນຮ້ານ, ປະເພນີຂອງເຜົ່າລາວ ກ່ອນຈະປຸກສ້າງເຮືອນຊານ ຕ້ອງເຮັດພິທີທາງສາສະໜາສາກ່ອນ ເພື່ອຂໍອະນຸຍາດຈາກເຈົ້າຖິ່ນ, ເຈົ້າຖານເສຍ ກ່ອນແລ້ວຈຶ່ງຂຸດຂຸມບ່ອນຝັງເສົາເຮືອນ. ເຂົາເຈົ້າສານກວາຍ (ໄຊ) ໃສ່ເຄື່ອງສົມ, ເຄື່ອງທານມີຕົ້ນກ້ວຍ, ຕົ້ນ ອ້ອຍ ແລະ ເຄື່ອງດື່ມອື່ນໆ ໃສ່ໃນກວາຍໃສ່ເຊົາທຳອິດ. ເອີ້ນວ່າເສົາຄ້ຳ, ເສົາຄູນຂອງເຮືອນ.ຫຼັງຈາກນັ້ນ, ຈຶ່ງມີການຂຸດຂຸມເສົາອື່ນໆ. ລົງຕາມລຳດັບຕໍ່ໆໄປ. ເຜົ່າລາວມັກຈະປຸກເຮືອນຫຼາຍຫ້ອງ ແລະ ແບ່ງເປັນຫຼາຍ ພາຍໃນເຮືອນ

ລັກສະນະເຮືອນຂອງເຜົ່າລາວ: ມັກນິຍົມກັນປິ່ນໜ້າໄປທາງທິດເໜືອ ແລະ ປິ່ນຫຼັງໃສ່ທາງທິດໃຕ້ແມ່ນດີທີ່ສຸດ, ສ່ວນຂັ້ນໄດຂຶ້ນ ເຮືອນແມ່ນນິຍົມເຮັດຢູ່ທາງໜ້າເຮືອນຫຼາຍກ່ວາ ຊຶ່ງເຜົ່າລາວເອີ້ນວ່າ: ຂັ້ນໄດເຊຍ ແລະ ຂັ້ນໄດເຮັດຢູ່ທາງດ້ານຫຼັງເອີ້ນວ່າ ໄດຊານ

ຂັ້ນໄດເຫຼົ່ານີ້ຈະມີຈັກຂັ້ນກໍ່ຕາມ ແຕ່ຕ້ອງແມ່ນຂັ້ນໄດຄີກຄື: 3,5,7,9,11) ແລະ ຢູ່ກ້ອງຕາລ່າງເຮືອນຈະເປັນບ່ອນ ເກັບມ້ຽນເຄື່ອງມືອຸປະກອນຕ່າງໆໃນການຜະລິດຂອງຄອບຄົວ.

ເຜົ່າລາວຢູ່ ແຂວງອຸດົມໄຊ ກໍ່ຄືເຜົ່າລາວຢູ່ໃນທົ່ວປະເທດ ລ້ວນແຕ່ມີເອກະລັກທາງດ້ານຮີດ ຄອງປະ ເພນີທັງແມ່ນຂໍ້ກຳນົດໃນການ ປະພຶດຕົວທາງດ້ານກິລິຍາມາລະຍາດ ແລະ ຄວາມຄາລະວະອ່ອນນ້ອມຕໍ່ຜູ້ເປັນເຈົ້າຂອງເຮືອນ. ພວກເຮົາຈະພົບເຫັນເວລາທີ່ມີແຂກ ທາງນອກເຂົ້າມາກ່ອນຈະຂຶ້ນຂັ້ນໄດເຮືອນ ຊານຕ້ອງໄດ້ປົດເກີບ, ປົດໝວກ, ປົດເຄື່ອງສາກ່ອນເພື່ອສະແດງຄວາມເຄົາລົບນັບຖືເຈົ້າຂອງເຮືອນ. ນອກຈາກນີ້ແຂກທາງນອກ ຈະຂຶ້ນ ຂັ້ນໄດເຮືອນທາງໜ້າ ແລ້ວຈະລົງຂັ້ນໄດຮືອນທາງຫຼັງກໍ່ບໍ່ໄດ້ເດັດຂາດ, ຈະຜິດກັບຮີດຄອງປະເພນີ, ນອກຈາກ ນີ້ສະມາຊິກພາຍໃນເຮືອນກໍ່ຄືແຂກຄົນພາຍນອກຈະເຂົ້າຫ້ອງນອນຂອງກັນ ແລະ ກັນໂດຍສະເພາະ ແມ່ນຫ້ອງ ນອນຂອງພໍ່ ແມ່ຜູ້ເປັນເຈົ້າຂອງເຮືອນກໍ່ບໍ່ໄດ້ເດັດຂາດ.

ຊົນເຜົ່າລາວ ມີເອກະລັກສະເພາະຂອງຕົນເອງເພດຊາຍ ແລະ ເພດຍິງມີການນຸ່ງຖື, ແຕ່ງກາຍແຕກຕ່າງກັນ ຜູ້ຊາຍນຸ່ງໂສ້ງ, ເສື້ອຄໍມົນ ແລະ ຕັດຜົມສັ້ນ. ສ່ວນຜູ້ຍິງນຸ່ງສິ້ນ, ຈິ່ງຜົມຍາວ, ເກົ້າຜົມຄ່ຽນດ້ວຍເສັ້ນເງິນ, ຄຳ, ໝາກປັດ ແລະ ເກົ້າປັດໃຫ້ ແຫນັ້ນປະດັບເອ້ຍ້ອງດ້ວຍການໃສ່ຕຸ້ມຫູ, ສ້ອຍຄໍ, ນຸ່ງເສື້ອຄໍມົນແຂນຕັ້ງພາດຜ້າບ່ຽງ ແລະ ນຸ່ງສິ້ນໄໝ, ສິນຊະນິດຕ່າງໆ ດ້ວຍແພໄຫມລາວ

ຊົນເຜົ່າລາວ: ຈະມີບຸນຕາມຮີດຄອງປະເພນີໃນທຸກໆເດືອນ (ຕາມຮີດ 12 ຄອງ 14) ແຕ່ລະບຸນປະເພນີ ລ້ວນແຕ່ມີຄວາມໝາຍສຳຄັນ. ແຕ່ບຸນທີ່ຂາດບໍ່ໄດ້ແມ່ນບຸນປີໃໝ່ລາວ, ບຸນຊ່ວງເຮືອ, ບຸນບັ້ງໄຟ, ບຸນກະຖິນ, ບຸນກອງບວດ, ບຸນທາດຫຼວງ ແລະ ບຸນອື່ນໆ.

ຊົນເຜົ່າລາວ ມີປະເພນີການເກີດລູກຕ້ອງໄດ້ເກີດຢູ່ໃນເຮືອນ, ມີໝໍຕຳແຍ, ໝໍມົນ ແລະ ຜູ້ທີ່ມີປະສົບການ ຄອຍໃຫ້ການດູແລຊ່ວຍເຫຼືອເວລາເກີດລູກ. ມີປະເພນີຢູ່ກຳຮອດໜຶ່ງເດືອນ, ມີການຄະລຳອາຫານທີ່ຍ້ານຜິດ ເດືອນ. ພາຍຫຼັງຢູ່ກຳແລ້ວມີປະເພນີສູ່ຂ້ວນແອນ້ອຍ ແລະ ແມ່ເອີ້ນວ່າ: ຂວັນອອກກຳ

ຊົນເຜົ່າລາວ ມີປະເພນີການສົ່ງສະການດ້ວຍການຈັດສາກຊົບຂອງຜູ້ຕາຍຢູ່ປ່າຊ້າ ຫຼື ຢູ່ວັດ, ເກັບກະດູກ ແລະ ເຮັດບຸນສົມກົນທານ ໃຫ້ຜູ້ທີ່ຕາຍຢ່າງສົມກຽດທີ່ສຸດ, ເພື່ອໃຫ້ຜູ້ທີ່ຕາຍໄປຮອດສະຫວັນຢ່າງປອດໄພ.

ດ້ານສິລະປະວັນນະຄະດີຂອງຊົນເຜົ່າລາວ: ມີຫຼາກຫຼາຍທີ່ສຸດເຊັ່ນ: ການຂັບ, ການລຳ, ຂັບທຸ້ມອ່ານໜັງ ສື, ລຳລ່ອງ, ລຳເຕີ້ຍ, ລຳເພີນ, ລຳເດີນ ແລະ ລຳອື່ນໆ. ເຄື່ອງດົນຕີພື້ນເມືອງລາວມີ: ແຄນ, ກອງຕຸ້ມ, ກອງ, ຊໍ, ລະນາດ, ຄ້ອງວົງ, ຂຸ່ຍ, ກະຈັບປີ່ ແລະ ອື່ນໆ. ສ່ວນລາວ ພວນເມືອງຮຸນຈະມີດົນຕີພື້ນເມືອງເຊັ່ນ: ກອງຂັນ, ແຄນ 8, ຄ້ອງຕຸ້ມ, ແຊ່ງ, ຊໍ, ເກິ່ງ, ທຳນອງຂັບພວນ (ໂອພວນ) ຂັບກະເລິງ, ນັບບໍ່ເປັນທຳ ນອງທີ່ເປັນເອກະລັກສະເພາະຂອງເມືອງຮຸນເທົ່ານັ້ນບໍ່ມີທ້ອງຖິ່ນໃດອີກແລ້ວໃນປະເທດລາວນີ້.

ດ້ານເສດຖະກິດ: ເຜົ່າລາວມີອາຊີບຕົ້ນຕໍແມ່ນການເຮັດນາປູກເຂົ້າມີບາງບ່ອນກໍ່ເຮັດໄຮ່ປູກເຂົ້າ, ເຮັດສວນປູກ ພືດຜັກສວນຄົວປະຈຳວັນ ແລະ ລ້ຽງສັດໃຫຍ່ ງົວ, ຄວາຍ, ແບ້, ໝູ, ໝາ, ມ້າ, ລ້ຽງສັດປີກ ແລະ ລ້ຽງປາ. ນອກຈາກນີ້ຍັງ ມີອາຊີບຄ້າຂາຍເພື່ອເສີມລາຍໄດ້ໃຫ້ແກ່ ຄອບຄົວ

ຊົນເຜົ່າລາວ: ກໍ່ແມ່ນຊົນເຜົ່າໜຶ່ງທີ່ຍັງຮັກສາຂະນົບທຳນຽມ,ຮີດຄອງປະເພນີອັນດີງາມຂອງຊາດເຮົາໄວ້ໄດ້ , ແຕ່ກໍ່ຍັງມີບັນຫາທີ່ຫຍໍ້ທໍ້ ຂອງຊົນເຜົ່າລາວພາກສ່ວນໜຶ່ງແມ່ນລົງໄຫຼວັດທະນາທຳຕາເວັນຕົກຫຼາຍເກີນໄປ ເຫັນໄດ້ຈາກການນຸ່ງຖື, ການແຕ່ງກາຍການເຂົ້າຮ່ວມບຸນສຳຄັນຕ່າງໆທາງພຸດທະສາສະໜາ ຈະສັງເກດເຫັນມີແຕ່ຄົນເຖົ້າຄົນແກ່ທີ່ຍັງຮັກສາການນຸ່ງຖືແບບດັ້ງເດີມ, ສ່ວນລຸ້ນໜຸ່ມໜ້ອຍສືບທອດແມ່ນຍັງມີໜ້ອຍ.

## Lao Ethnic Group

Lao ethnic group is considered as the largest community in Laos. Lao people have been living in this country region for more than 2,000 years ago, especially in Oudomxay province. The majority of Lao people like to settle down their livelihood along the river. They have been calling themselves "Lao" for centuries.

Lao people have their own speaking language and linguistic writing form, Lao is used as the country official language that everyone has to learn at school even in rural area. There are many sub - tribes are along and the speaking accent of each region is totally different. Moreover, Lao has Buddhist language as well. Most of Lao people are Buddhists. Temples can be found and seen in almost villages. Some Lao people still believe in natural power, for instance, spirit (Ghost) of the father and mother, spirit (Ghost) of the house, spirit (Ghost) of the village, spirit (Ghost) of the cemetery, spirit (Ghost) of the Naga – Snake and others. Lao men are not allowed to have many wives.

The traditional house construction of Lao people is built up on strong wooden posts depending on the dimension planed. The house is divided into many different rooms such as bedroom, kitchen and outside balcony back porch. An ancestral altar is also hung on the middle post of the house as a worship place. The roof is always covered by cogon grass or zinc. Lumber is used for the floor. One important thing is the front of the house has to face to the North and the back to the South.

The birth takes place in the couple's bedroom or at the hospital. Giving a birth of a new born child is a special present from heaven, the father calls in his family members, relatives, village elders and other people to hold a welcome ceremony for having a new born baby. Pigs and chickens are killed for sacrifice and thankfulness to the Buddha and natural powers they trust, and to invite the soul to take up permanent residence within the child's body and in the parental household. This serves to adopt the child into the world of human beings, and formally accept it into the parent's relationship group. The baby is then given a name and introduced to the household sprits to give it protection.

To have a proper funeral is of great importance to Lao people, for as a result the soul will prosper in the afterworld. When death seems about to happen, close relatives gather together around for sharing the many duties that arise when death occurs. Most of the corpse will be burned in accordance with religious practice at the nearby cemetery.

Lao is rich in literature, traiditional instrument, music, arts, performance and other related things such as Lao traditional Lam Vong Dancing, Lao traditional singing like" Lum long, Lum Teuy, Lum Pern, Lum Tang Wai", Lao Flute, Xylophone, Lao Mouth Organ, Lao drum, Lao song and others. These will be displayed and performed during Lao New Year, wedding ceremony, events, and festivals and etc.